ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 1499 /ກງ

ນະຄອນຫລວງວຽງຈັນ, ວັນທີ 03 JUN 2013

## ແຈ້ງການແນະນຳ

*ເຖິງ* : - ກົມພາສີ

- ກົມສ່ວຍສາອາກອນ
- ກົມຄຸ້ມຄອງຊັບສິນຂອງລັດ
- ກົມກວດກາການເງິນ
- ບັນດາພະແນກການເງິນປະຈຳແຂວງ ແລະ ນະຄອນຫລວງວຽງຈັນ.

*ເລື່ອງ* : ການຄຸ້ມຄອງຈັດເກັບລາຍຮັບຈາກໄມ້, ແຮ່ທາດ ແລະ ເຄື່ອງປ່າຂອງດົງ.

- ອີງຕາມດຳລັດນາຍົກລັດຖະມົນຕີ ສະບັບເລກທີ 80/ນຍ ລົງວັນທີ 28/02/2007 ວ່າດ້ວຍການຈັດຕັ້ງແລະ ການເຄື່ອນໄຫວຂອງກະຊວງການເງິນ.
- ອີງຕາມນະຕິກຳລົງຂອງສະພາລັດຖະມົນຕີ ສະບັບເລກທີ 47/ປສລ ລົງວັນທີ 26 ມິຖຸນາ 1989 ວ່າດ້ວຍລະບອບພາສີອາກອນຂອງລັດ.
- ອີງຕາມດຳລັດນາຍົກລັດຖະມົນຕີ ສະບັບເລກທີ 90/ນຍ ລົງວັນທີ 9/06/2008 ວ່າດ້ວຍການສົ່ງອອກຜະລິດຕະພັນແຮ່ທາດ.
- ອີງຕາມຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 17/ນຍ ລົງວັນທີ 22/09/2008 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ການປະສານງານໃນການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້.

ເພື່ອເພີ່ມທະວີ ແລະ ເຂັ້ມງວດ ໃນການຄຸ້ມຄອງຈັດເກັບລາຍຮັບຈາກໄມ້, ແຮ່ທາດ ແລະ ເຄື່ອງປ່າຂອງດົງ ໃຫ້ສອດຄ່ອງກັບລະບຽບກົດໝາຍ ຂອງ ສປປ ລາວ, ແນໃສ່ເພື່ອໃຫ້ຂອດປະສານສົມທົບພາຍໃນຂະແໜງການເງິນ ມີຄວາມໜັກແໜ້ນ, ສ້າງທ່າແຮງໃນການຈັດເກັບລາຍຮັບເຂົ້າງົບປະມານແຫ່ງລັດ ຢ່າງມີປະສິດທິຜົນ.

ລັດຖະມົນຕີວ່າການກະຊວງການເງິນ ແຈ້ງການແນະນຳ, ຄື :

1. ການຈັດເກັບລາຍຮັບຈາກການຂຸດຄົ້ນ, ຊື້ຂາຍ ແລະ ສົ່ງອອກ ໄມ້, ແຮ່ທາດ ແລະ ເຄື່ອງຂອງປ່າຂອງດົງ ຂອງຂະແໜງການເງິນ, ປະກອບມີ ຂະແໜງຊັບສິນຂອງລັດ, ຂະແໜງສ່ວຍສາອາກອນ ແລະ ຂະແໜງພາສີ ໂດຍໃຫ້ຈັດຕັ້ງປະຕິບັດຕາມຄຳສັ່ງນາຍົກ ລັດຖະມົນຕີ ສະບັບເລກທີ 17/ນຍ ລົງວັນທີ 22/09/2008 ວ່າດ້ວຍການເພີ່ມທະວີຄວາມ ເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ການປະສານງານໃນການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້, ແລະ ດຳລັດນາຍົກລັດຖະມົນຕີ ສະບັບເລກທີ 90/ນຍ ລົງວັນທີ 9/06/2008 ວ່າດ້ວຍການສົ່ງອອກຜະລິດຕະພັນແຮ່ທາດ.
2. <u>ຂະແໜງຊັບສິນຂອງລັດ</u> ມີໜ້າທີ່ຄຸ້ມຄອງຈັດເກັບຄ່າຊັບພະຍາກອນທຳມະຊາດ ຈາກການຂາຍໄມ້, ແຮ່ທາດ ແລະ ເຄື່ອງຂອງດົງ ໃນເວລາເຮັດສັນຍາຊື້ຂາຍໄມ້ ຫລື ສັນຍາຂຸດຄົ້ນແຮ່ທາດ ໂດຍຈັດຕັ້ງປະຕິບັດໃຫ້ສອດຄ່ອງ ຕາມບົດແນະນຳຂອງລັດຖະມົນຕີວ່າການກະ ຊວງການເງິນ ສະບັບເລກທີ 092/ກງ ລົງວັນທີ 13/01/2009 ກ່ຽວກັບການຄຸ້ມຄອງເກັບລາຍຮັບທີ່ໄດ້ຈາກການຂາຍໄມ້ ແລະ ເຄື່ອງປ່າຂອງດົງ ແລະ ແຈ້ງການແນະນຳເພີ່ມເຕີມຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 566/ກງ ລົງວັນທີ 7/03/20011.
3. <u>ຂະແໜງສ່ວຍສາອາກອນ</u> ມີໜ້າທີ່ຄຸ້ມຄອງຈັດເກັບອາກອນມູນຄ່າເພີ່ມ ແລະ ອາກອນກຳໄລໃນເວລາມີການຂຸດຄົ້ນ ແລະ ຊື້ຂາຍ ໄມ້, ແຮ່ທາດ ແລະ ເຄື່ອງຂອງດົງ ຕາມທີ່ໄດ້ກຳນົດໄວ້ໃນບົດແນະນຳຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 0509/ກງ ລົງວັນທີ 13/03/2009.
4. <u>ຂະແໜງພາສີ</u> ມີໜ້າທີ່ຄຸ້ມຄອງກວດກາ ແລະ ຈັດເກັບຄ່າຊັກພິເສດຂາອອກໄມ້, ແຮ່ທາດ ແລະ ເຄື່ອງປ່າຂອງດົງ ໃນເວລາມີການສົ່ງອອກທີ່ດ່ານຊາຍແດນ ຕາມການອະນຸມັດຂອງລັດຖະບານ ແລະ ຂະແໜງການກ່ຽວຂ້ອງ.

ການຈັດເກັບລາຍຮັບຂອງຂະແໜງພາສີ ສຳລັບຂາອອກ ມີ ສອງປະເພດ, ຄື : ຄ່າພາສີຂາອອກ ໃຫ້ປະຕິບັດຕາມລັດຖະບັນປະເທດ ສະບັບເລກທີ 02/ປທທ ລົງວັນທີ 27 ເມສາ 2012, ສ່ວນລາຍການສິນຄ້າຂາອອກ ໃດທີ່ບໍ່ມີໃນລັດຖະບັນປະເທດສະບັບດັ່ງກ່າວໃຫ້ຈັດຕັ້ງປະຕິບັດຕາມມະຕິຕົກລົງຂອງສະພາລັດຖະມົນຕີ ສະບັບເລກທີ 47/ປສລ ລົງວັນທີ 26 ມິຖຸນາ 1989 ວ່າດ້ວຍລະບອບພາສີອາກອນຂອງລັດ ແລະ ມະຕິຕົກລົງຂອງສະພາລັດຖະມົນຕີ ເລກທີ 23/ປສລ ລົງວັນທີ 18 ເມສາ 1990 ວ່າດ້ວຍການດັດແກ້ມາດຕາ 16 ຂອງມະຕິ 47/ປສລ.

5. ການສົ່ງອອກຜະລິດຕະພັນກະສິກຳ, ຜະລິດຕະພັນໄມ້ສຳເລັດຮູບ ແມ່ນໄດ້ຮັບການຍົກເວັ້ນຄ່າຊັກພິເສດຂາອອກ ຕາມທີ່ກຳນົດໄວ້ໃນດຳລັດນາຍົກລັດຖະມົນຕີ ສະບັບເລກທີ 187/ນຍ ລົງວັນທີ 21 ຕຸລາ 1994.

6. ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງໄດ້ຮັບຮູ້, ປະສານສົມທົບກັນ ແລະ ຊີ້ນຳພະນັກງານທີ່ຂຶ້ນກັບຄຸ້ມຄອງຕົນ ເພື່ອພ້ອມກັນຈັດຕັ້ງປະຕິບັດ ແຈ້ງການແນະນຳສະບັບນີ້ ຢ່າງເຂັ້ມງວດ ແລະ ໄດ້ຮັບຜົນເປັນຢ່າງດີ.

ລັດຖະມົນຕີວ່າການກະຊວງການເງິນ,

ພູເພັດ ຄຳພູນວົງ

<u>ບ່ອນສົ່ງ</u> :

| | |
|---|---|
| - ຫ້ອງວ່າການສູນກາງພັກ | 1 ສະບັບ "ເພື່ອຊາບ" |
| - ລັດຖະມົນຕີປະຈຳສຳນັກງານນາຍົກ, ຫົວໜ້າຫ້ອງການລັດຖະບານ | 1 ສະບັບ "ເພື່ອຊາບ" |
| - ບັນດາແຂວງໃນທົ່ວປະເທດ, ແຂວງລະ | 1 ສະບັບ"ເພື່ອຊາບ" |
| - ກະຊວງອຸດສະຫະກຳ-ການຄ້າ | 1 ສະບັບ "ເພື່ອຊາບ" |
| - ກະຊວງກະສິກຳ-ປ່າໄມ້ | 1 ສະບັບ "ເພື່ອຊາບ" |
| - ກະຊວງພະລັງງານບໍ່ແຮ່ | 1 ສະບັບ"ເພື່ອຊາບ" |
| - ກະຊວງຊັບພະຍາກອນແລະສິ່ງແວດລ້ອມ | 1 ສະບັບ"ເພື່ອຊາບ" |